# ແຜນການສອນ ເພດສຶກສາ

## ສຳລັບອາຊີຕາເວັນອອກສຽງໃຕ້ ຂອງ amaze



### ຄວາມສຳພັນທີ່ດີ

amaze

Advocates for Youth
Rights. Respect. Responsibility.

unesco

UNFPA

# ກ່ຽວກັບບົດຮຽນບົດນີ້...

ແຜນການສອນນີ້ ແມ່ນຫນຶ່ງໃນຊຸດແຜນການສອນທີ່ມີ 9 ບົດແຍກ ທີ່ເປັນຕົ້ນສະບັບ ເພື່ອສະໜັບສະໜູນການສອນວິຊາເພດສຶກສາ ໃນໂຮງຮຽນ ຫຼື ນອກໂຮງຮຽນ ໃນອາຊີຕາເວັນອອກສຽງໃຕ້. ແຜນການສອນຕົ້ນສະບັບນີ້ ຖືກອອກແບບມາເພື່ອລວມເຂົ້າໃຊ້ໃນຊຸດວິດີໂອເພື່ອການສຶກສາຂອງ AMAZE ທີ່ກ່ຽວຂ້ອງກັບຫົວຂໍ້ແຜນການສອນ ແລະ ສາມາດນໍາໃຊ້ເພື່ອເສີມກັບແຜນການສອນ ຫຼື ແຫຼ່ງຂໍ້ມູນ ທີ່ມີຢູ່ແລ້ວ ທີ່ທ່ານອາດໃຊ້ໃນການນໍາສະເໜີວິຊາເພດສຶກສາ.

ຕາມຫຼັກການແລ້ວ, ການຮຽນຮູ້ກ່ຽວກັບຫົວຂໍ້ເພດສຶກສາສະເພາະໃດໜຶ່ງ ຄວນໃຫ້ຜູ້ຮຽນມີໂອກາດໄດ້ພັດທະນາ, ນໍາໃຊ້ ແລະ ຝຶກຝົນການຮຽນຮູ້ ໃນແງ່ຂອງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ໃນແຜນການສອນເຫຼົ່ານີ້ ພວກເຮົາໄດ້ຍົກຕົວຢ່າງຜົນການຮຽນຮູ້ເບື້ອງຕົ້ນພຽງຈໍານວນໜຶ່ງທີ່ສາມາດກໍານົດເປົ້າຫມາຍໄດ້ ໂດຍຄໍານຶງວ່າບົດຮຽນພຽງບົດດຽວ ມັກຈະບໍ່ພຽງພໍທີ່ຈະບັນລຸ ຜົນການຮຽນໃດໜຶ່ງໄດ້ຢ່າງເລິກເຊິ່ງ ຫຼື ກວມເອົາຫຼາຍກວ່າຫນຶ່ງຂົງເຂດການຮຽນຮູ້ໄດ້. ເຮົາຊຸກຍູ້ໃຫ້ຄູຈັດຕາຕະລາງເວລາ ໃຫ້ມີການສອນບົດຮຽນຕິດຕາມເພີ່ມເຕີມ ເພື່ອສົ່ງເສີມຜົນການຮຽນຮູ້ທີ່ເປັນຈຸດປະສົງຂອງບົດຮຽນເພດສຶກສາເຫຼົ່ານີ້, ແລະ ໃຊ້ປະໂຫຍດຈາກໂອກາດອື່ນໆທັງຢູ່ໃນ ແລະ ນອກຫ້ອງຮຽນ ທີ່ຊ່ວຍໃຫ້ຜູ້ຮຽນສາມາດສະທ້ອນທັດສະນະຄະຕິ ແລະ ຝຶກຝົນ ແລະ ເສີມສ້າງທັກສະ.

TH/DOC/HWT-IQE/23/002-LA-4

amaze

# ຄວາມສຳພັນທີ່ດີ

*ແຜນການສອນ ເພດສຶກສາ ຂອງ* **amaze**

## ຄວາມສອດຄ່ອງກັບ ຄຳແນະນຳສາກົນ ດ້ານວິຊາການກ່ຽວກັບເພດສຶກສາ

**ແນວຄວາມຄິດຫຼັກທີ 1:** ຄວາມສຳພັນ.

- **ຫົວຂໍ້ 1.3:** ຄວາມອົດທົນ, ຄວາມເທົ່າທຽມ ແລະ ການເຄົາລົບ, ອາຍຸ 9-12 ປີ

**ແນວຄວາມຄິດຫຼັກທີ 4:** ຄວາມຮຸນແຮງ ແລະ ການຢູ່ຢ່າງປອດໄພ

- **ຫົວຂໍ້ 4.1:** ຄວາມຮຸນແຮງ; ອາຍຸ 9-12 ປີ

## ຄວາມຮູ້ພື້ນຖານຂອງນັກຮຽນ

ນັກຮຽນໄດ້ຮຽນຮູ້ວ່າ ມັນມີຄວາມສຳພັນທີ່ດີ ແລະ ຄວາມສຳພັນທີ່ບໍ່ດີແນວໃດ

## ກຸ່ມອາຍຸເປົ້າໝາຍ

ຊັ້ນມັດທະຍົມສຶກສາປີທີ 2-3 (ອາຍຸປະມານ 10-14 ປີ)

## ເວລາ

45 ນາທີ

## ການກະກຽມຂອງຄູ

- ພິມເອກະສານຕໍ່ໄປນີ້ອອກເພື່ອແຈກຢາຍ:
  - ແຜ່ນວຽກບົດຝຶກຫັດ: ເຈົ້າຕ້ອງການຫຍັງໃນຄວາມສຳພັນກັບໝູ່ຂອງເຈົ້າ? - ໜຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ
  - ເອກະສານສຳລັບແຈກຢາຍ: ສະຖານະການຄວາມສຳພັນ - ສຳເນົາ 6 ຊຸດ
  - ເອກະສານສຳລັບແຈກຢາຍ: ສັນຍານທີ່ດີ, ທີ່ບໍ່ດີ ແລະ ສັນຍານເຕືອນຂອງການລ່ວງລະເມີດ - ໜຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ
- ກຽມພ້ອມທີ່ຈະສົ່ງຕໍ່ນັກຮຽນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອໃຫ້ກັບທີ່ປຶກສາຂອງໂຮງຮຽນ (ຖ້າມີ) ແລະນັກຮຽນຕົກລົງເຫັນດີ.
- ຖ້າທີ່ປຶກສາຂອງໂຮງຮຽນບໍ່ມີ, ໃຫ້ຄົ້ນຫາເບີໂທສາຍດ່ວນທ້ອງຖິ່ນ ແລະ ຂໍ້ມູນກ່ຽວກັບການໃຫ້ບໍລິການສຳລັບຜູ້ທີ່ເຄີຍຖືກລ່ວງລະເມີດ ເພື່ອໃຫ້ສາມາດສະໜອງຂໍ້ມູນໃຫ້ນັກຮຽນຜູ້ທີ່ຂໍຄວາມຊ່ວຍເຫຼືອ, ຂຽນໄວ້ເທິງກະດານດຳ, ແລະ /ຫຼື ຕື່ມໃສ່ໃນເອກະສານສຳລັບແຈກຢາຍ: ສັນຍານທີ່ດີ, ທີ່ບໍ່ດີ ແລະ ສັນຍານເຕືອນຂອງການລ່ວງລະເມີດ.
- ພິມອອກ ຫຼື ຂຽນໃສ່ເຈ້ຍ 12 ໃບ ໂດຍເຈ້ຍແຕ່ລະໃບ ໃຫ້ຂຽນຄຸນລັກສະນະຈາກແຜ່ນວຽກບົດຝຶກຫັດ: ເຈົ້າຕ້ອງການຫຍັງໃນຄວາມສຳພັນກັບໝູ່ຂອງເຈົ້າ?, ໃຫ້ຂຽນໜັງສືໂຕໃຫຍ່ໆ ແລະ ຕິດໃສ່ຝາໄວ້ອ້ອມຫ້ອງ.
- ໃຫ້ຂຽນຄຳຖາມເຫຼົ່ານີ້ໃສ່ກະດານດຳກ່ອນລ່ວງໜ້າ:
  - ເຈົ້າຄິດວ່ານີ້ແມ່ນຄວາມສຳພັນທີ່ດີ ຫຼື ບໍ່ດີ? ຍ້ອນຫຍັງ?
  - ສັນຍານອັນໃດທີ່ບົ່ງບອກເຖິງຄວາມສຳພັນທີ່ດີ ຫຼື ບໍ່ດີ ທີ່ເຈົ້າເຫັນໃນຄວາມສຳພັນຂອງພວກເຂົາ ຈາກເອກະສານສຳລັບແຈກຢາຍ?
  - ພວກເຂົາທັງສອງ ສາມາດຕັດສິນໃຈກ່ຽວກັບຄວາມສຳພັນຂອງພວກເຂົາໄດ້ຢ່າງເທົ່າທຽມກັນບໍ່? ຖ້າບໍ່, ຍ້ອນຫຍັງຈຶ່ງບໍ່ເທົ່າທຽມກັນ?
- ເຂົ້າເຖິງ ແລະ ເບິ່ງຕົວຢ່າງ ວິດີໂອຂອງ AMAZE ກ່ຽວກັບ ຄວາມສຳພັນທີ່ດີ ເພື່ອໃຫ້ລຶ້ງເຄີຍກັບເນື້ອຫາ ແລະ ໃຫ້ແນ່ໃຈວ່າທ່ານຮູ້ສຶກສະບາຍໃຈທີ່ຈະເປີດມັນຢູ່ໃນຫ້ອງຮຽນ.
- ທົດສອບເປີດວິດີໂອເພື່ອໃຫ້ກຽມພ້ອມເບິ່ງໃນລະຫວ່າງການຂຶ້ນສອນ, ບໍ່ວ່າຈະເປັນການວາງລຳດັບການເປີດຈົນຮອດຕອນເລີ່ມຕົ້ນ (ເພື່ອຫຼີກລ່ຽງໂຄສະນາ) ໃນ YouTube, ອອກຈາກ **ລາຍການຫຼິ້ນຂອງ AMAZE,** ຫຼື ສະບັບທີ່ໄດ້ດາວໂຫຼດມາ. ພິຈາລະນາເລືອກໃຊ້ **ລູກຫຼິ້ນຄວາມໄວຂອງ YouTube** ເພື່ອປັບຄວາມໄວຂອງວິດີໂອເພື່ອໃຫ້ແທດເໝາະທີ່ສຸດສຳລັບນັກຮຽນ.

# ຄວາມສຳພັນທີ່ດີ

*ແຜນການສອນ*
*ເພດສຶກສາ ຂອງ* **amaze**

## ອຸປະກອນ/ເອກະສານທີ່ຕ້ອງການ

- ຄອມພິວເຕີ ທີ່ສາມາດເຂົ້າເຖິງອິນເຕີເນັດ ແລະ ລຳໂພງ
- ເຄື່ອງສາຍ LCD ແລະ ຈໍ
- ລິ້ງວີດີໂອ: https://youtu.be/x6nRC8NicQw
- ເຈ້ຍ
- ແຜ່ນວຽກບົດຝຶກຫັດ: ເຈົ້າຕ້ອງການຫຍັງໃນຄວາມສຳພັນກັບໝູ່ຂອງເຈົ້າ?
- ເອກະສານສຳລັບແຈກຢາຍ: ສະຖານະການຄວາມສຳພັນ
- ເອກະສານສຳລັບແຈກຢາຍ: ສັນຍານທີ່ດີ, ທີ່ບໍ່ດີ ແລະ ສັນຍານເຕືອນຂອງການລ່ວງລະເມີດ
- ສະກັອດຕິດເຈ້ຍ
- ກະດານດຳ ແລະ ສໍຂາວ



## ຈຸດປະສົງການຮຽນຮູ້

ໃນຕອນທ້າຍຂອງບົດຮຽນນີ້, ນັກຮຽນຈະສາມາດ:

1. ອະທິບາຍໄດ້ຢ່າງໜ້ອຍສາມຢ່າງ ທີ່ຄົນເຮັດ ໃນຄວາມສຳພັນທີ່ດີ. (ຄວາມຮູ້)
2. ອະທິບາຍໄດ້ຢ່າງໜ້ອຍສາມຢ່າງ ທີ່ຄົນເຮັດ ໃນຄວາມສຳພັນທີ່ບໍ່ດີ. (ຄວາມຮູ້)
3. ຮັບຮູ້ວ່າການມີໂອກາດທີ່ເທົ່າທຽມກັນໃນການຕັດສິນໃຈ ຫຼື ສະແດງທັດສະນະຂອງຕົນເອງ ຈະຊ່ວຍໃຫ້ມີຄວາມສຳພັນທີ່ດີ. (ທັດສະນະຄະຕິ)

* **ໝາຍເຫດສຳລັບຄູ:** ບົດຮຽນນີ້ອາດຈະເຮັດໃຫ້ຄວາມເຈັບປວດທາງຈິດໃຈຂອງນັກຮຽນທີ່ກຳລັງປະເຊີນ ຫຼື ເຄີຍມີຄວາມສຳພັນທີ່ບໍ່ດີ ຫຼື ຖືກຂົ່ມເຫັງ ກັບຄືນມາ. ໃຫ້ແນ່ໃຈວ່າ ທ່ານໄດ້ບອກໃຫ້ນັກຮຽນຮູ້ວ່າເຂົາເຈົ້າສາມາດລົມກັບທ່ານເປັນການສ່ວນຕົວໄດ້ຫຼັງເລີກຮຽນ ຖ້າເຂົາເຈົ້າຕ້ອງການ ແລະ ກຽມພ້ອມທີ່ຈະຊ່ວຍສົ່ງຕໍ່ໄປຫາສາຍດ່ວນການຊ່ວຍເຫຼືອ, ທີ່ປຶກສາ, ຫຼື ບໍລິການດ້ານສຸຂະພາບຕາມຄວາມຕ້ອງການ. ກຽມພ້ອມທີ່ຈະສົນທະນາກັບນັກຮຽນຜູ້ທີ່ອາດຈະເລີ່ມເປີດເຜີຍປະສົບການສ່ວນຕົວທີ່ມີຄວາມສຳພັນທີ່ບໍ່ດີ ຫຼື ຖືກຂົ່ມເຫັງ ໃນລະຫວ່າງການຮຽນ ໂດຍການຮັບຮູ້ສິ່ງທີ່ພວກເຂົາແບ່ງປັນ ແລະ ໃຫ້ພວກເຂົາຮູ້ວ່າພວກເຂົາສາມາດລົມກັບທ່ານໄດ້ຫຼັງເລີກຮຽນ.

## ຂັ້ນຕອນ

### ຂັ້ນຕອນທີ 1

ແນະນຳບົດຮຽນໂດຍກ່າວວ່າ, **"ມື້ນີ້ພວກເຮົາຈະສົນທະນາກ່ຽວກັບເລື່ອງຄວາມສຳພັນ, ສິ່ງໃດທີ່ເຮັດໃຫ້ຄວາມສຳພັນນັ້ນດີ ຫຼື ບໍ່ດີ, ແລະ ວິທີການແນວໃດທີ່ເຮັດໃຫ້ບຸກຄົນໃດໜຶ່ງຮັບຮູ້ວ່າພວກເຂົາກຳລັງຢູ່ໃນຄວາມສຳພັນທີ່ບໍ່ດີ. ໃຫ້ເລີ່ມຕົ້ນໂດຍການຄິດກ່ຽວກັບປະເພດຂອງຄວາມສຳພັນທີ່ຄົນເຮົາມີ**". ຖາມນັກຮຽນວ່າ, "**ຄົນເຮົາມີຄວາມສຳພັນຫຍັງແດ່ທີ່ແຕກຕ່າງກັນ?**" ຂຽນຄຳຕອບຂອງເຂົາເຈົ້າໃສ່ກະດານດຳ. ສອບຖາມຕື່ມບັນດາຄຳຕອບ ເຊັ່ນ: ຄວາມສຳພັນລະຫວ່າງໝູ່ເພື່ອນ, ກັບຄອບຄົວ, ຫຼື ຄວາມສຳພັນລະຫວ່າງຄົນທີ່ມີຄວາມຮັກ.

ເມື່ອນັກຮຽນໄດ້ແບ່ງປັນຄຳຕອບຈຳນວນໜຶ່ງແລ້ວ, ຈົ່ງຢືນຢັນວ່າ ມັນມີຄວາມສຳພັນຫຼາຍປະເພດທີ່ແຕກຕ່າງກັນຄືກັບປະເພດທີ່ເຂົາເຈົ້າໄດ້ເວົ້າເຖິງ, ແລະ ບໍ່ວ່າຄົນເຮົາຈະມີຄວາມສຳພັນແບບໃດ ມັນກໍ່ຍ່ອມມີທັງຄວາມສຳພັນທີ່ດີ ແລະ ອາດມີຄວາມສຳພັນທີ່ບໍ່ດີເຊັ່ນກັນ.

(5 ນາທີ)

### ຂັ້ນຕອນທີ 2

ໃຫ້ເວົ້າວ່າ, **"ຕໍ່ໄປ, ພວກເຮົາຈະເບິ່ງວິດີໂອທີ່ເວົ້າເຖິງສິ່ງໃດທີ່ເຮັດໃຫ້ ຄວາມສຳພັນທີ່ດີ."** ຫຼິ້ນວິດີໂອ AMAZE ໃນຫົວຂໍ້ ຄວາມສຳພັນທີ່ດີ ເຊິ່ງມີຄວາມຍາວສອງນາທີ




**https://bit.ly/_healthyrelationships**

ຫຼັງຈາກໄດ້ຫຼິ້ນວິດີໂອແລ້ວ, ຈົ່ງອະທິບາຍໃຫ້ນັກຮຽນວ່າພວກເຂົາຈະໄດ້ຕອບຄຳຖາມຢູ່ໃນແຜ່ນວຽກບົດຝຶກຫັດ ໂດຍນຳໃຊ້ຂໍ້ມູນທີ່ໄດ້ຮັບຊົມຈາກວິດີໂອ. ແຈກຢາຍເອກະສານ "**ເຈົ້າຕ້ອງການຫຍັງໃນຄວາມສຳພັນກັບໝູ່ຂອງເຈົ້າ?**" ໃຫ້ແກ່ນັກຮຽນແຕ່ລະຄົນ. ຂໍໃຫ້ພວກເຂົາອ່ານຄືນແຜ່ນວຽກບົດຝຶກຫັດທີ່ໄດ້ແຈກຢາຍ, ໃຫ້ພວກເຂົາຄິດຫາສິ່ງທີ່ພວກເຂົາຄິດວ່າສຳຄັນທີ່ສຸດສຳລັບພວກເຂົາໃນຄວາມສຳພັນໃດໜຶ່ງ, ຍ້ອນຫຍັງ, ແລະ ໃຫ້ຂີດອ້ອມວົງມົນສາມສິ່ງທີ່ພວກເຂົາຄິດວ່າສຳຄັນທີ່ສຸດ. ນອກຈາກນັ້ນ, ຂໍໃຫ້ພວກເຂົາຂຽນຄຳອະທິບາຍສັ້ນໆກ່ຽວກັບມັນຢູ່ດ້ານລຸ່ມຂອງເຈ້ຍ. ໃຫ້ພວກເຂົາຮູ້ວ່າເມື່ອເຮັດສຳເລັດແລ້ວ, ພວກເຂົາຈະມີໂອກາດແບ່ງປັນສິ່ງທີ່ພວກເຂົາເລືອກ ຖ້າພວກເຂົາຕ້ອງການ.

(10 ນາທີ)

### ຂັ້ນຕອນທີ 3

ເມື່ອນັກຮຽນເຮັດບົດຝຶກຫັດສຳເລັດແລ້ວ, ໃຫ້ເຂົາເຈົ້າຊອກຫາສາມສິ່ງທີ່ເຂົາເຈົ້າເລືອກໃນແຜ່ນວຽກບົດຝຶກຫັດຂອງເຂົາເຈົ້າ ແລະໃຫ້ໄປໝາຍຕິກໃສ່ແຕ່ລະແຜ່ນເຈ້ຍໃນ 12 ແຜ່ນທີ່ທ່ານໄດ້ຕິດໃສ່ຝາອ້ອມຫ້ອງລ່ວງໜ້ານັ້ນ. ຫຼັງຈາກນັ້ນ, ໃຫ້ນັກຮຽນຢືນຢູ່ທາງຂ້າງຂອງຂໍ້ທີ່ເຂົາເຈົ້າເລືອກວ່າເປັນຂໍ້ທີ່ສຳຄັນທີ່ສຸດສຳລັບພວກເຂົາໃນຄວາມສຳພັນ. ເມື່ອນັກຮຽນຢືນຢູ່ທາງຂ້າງຂໍ້ທີ່ເຂົາເຈົ້າເລືອກເປັນອັນດັບໜຶ່ງແລ້ວ, ໃຫ້ເອົາໃຈໃສ່ຂໍ້ທີ່ມີຄະແນນສູງສຸດສອງເຖິງສາມຂໍ້ ແລະ ຂໍໃຫ້ນັກຮຽນຈຳນວນໜຶ່ງແບ່ງປັນຄວາມຄິດວ່າເປັນຫຍັງພວກເຂົາຈຶ່ງເລືອກແບບນັ້ນ ແລະ ຍົກຕົວຢ່າງວ່າມັນຫມາຍຄວາມວ່າແນວໃດ (ຕົວຢ່າງ: ຖ້າມັນແມ່ນ **"ສາມາດໄວ້ວາງໃຈເຊິ່ງກັນແລະກັນໄດ້"**, ຕົວຢ່າງອາດຈະແມ່ນ ສາມາດບອກໝູ່ຂອງເຈົ້າ ບາງສິ່ງທີ່ເຈົ້າບໍ່ຕ້ອງການໃຫ້ຄົນອື່ນຮູ້ ແລະ ຮູ້ວ່າເຂົາເຈົ້າຈະບໍ່ບອກຜູ້ອື່ນ.

ຕົວຢ່າງຄຳຖາມສົນທະນາງ່າຍໆທີ່ທ່ານອາດໃຊ້ ເພື່ອກະຕຸ້ນໃຫ້ນັກຮຽນແບ່ງປັນຄຳຄິດເຫັນ ອາດລວມມີ:

- **ເປັນຫຍັງພວກເຈົ້າທຸກຄົນຈຶ່ງເລືອກ [ ]? ບົ່ງຄຳຖາມໄປທີ່ກຸ່ມນັກຮຽນທີ່ຢືນຢູ່ຂ້າງເຄື່ອງໝາຍຕົກ.**
- **ມີຄົນອື່ນເລືອກ [ ] ຍ້ອນເຫດຜົນອື່ນບໍ່?**
- **ຕົວຢ່າງຂອງ [ ] ໃນຄວາມສຳພັນກັບໝູ່ຄົນໜຶ່ງມີຫຍັງແດ່? ຄົນໆນັ້ນຈະເຮັດຫຍັງ ຫຼື ບໍ່ເຮັດຫຍັງ?**

(15 ນາທີ)

## ຂັ້ນຕອນທີ 4

ຕໍ່ໄປ, ແບ່ງນັກຮຽນອອກເປັນກຸ່ມ ກຸ່ມລະ 3 ຫຼື 4 ຄົນ ແລະ ແຈກຢາຍເອກະສານ: ສັນຍານທີ່ດີ, ທີ່ບໍ່ດີ, ແລະ ສັນຍານເຕືອນຂອງການລ່ວງລະເມີດ (ໃຫ້ນັກຮຽນແຕ່ລະຄົນ). ບອກນັກຮຽນວ່າ, **"ເບິ່ງຄືວ່າເຈົ້າຮູ້ສຶກໄດ້ວ່າສິ່ງໃດສຳຄັນສຳລັບເຈົ້າໃນຄວາມສຳພັນກັບໝູ່. ຄູໄດ້ແຈກຢາຍເອກະສານໃຫ້ແຕ່ລະຄົນໄປ ເຊິ່ງແມ່ນເອກະສານທີ່ລະບຸຫຼາຍໆ ສິ່ງທີ່ພວກເຮົາໄດ້ສົນທະນາກັນວ່າ ຄົນເຮົາສາມາດເຮັດໄດ້ເພື່ອໃຫ້ມີຄວາມສຳພັນທີ່ດີ ເຊັ່ນດຽວກັນກັບສິ່ງທີ່ເຮັດໃຫ້ມີຄວາມສຳພັນທີ່ບໍ່ດີ. ໃນຂະນະທີ່ການຮູ້ວ່າເຮົາຕ້ອງການຫຍັງໃນຄວາມສຳພັນເປັນສິ່ງສຳຄັນ, ການທີ່ເຮົາຮູ້ວ່າເຮົາບໍ່ຕ້ອງການຫຍັງກໍ່ມີຄວາມສຳຄັນເຊັ່ນດຽວກັນ. ຕໍ່ໄປເຮົາມາເບິ່ງ ສະຖານະການຂອງຄວາມສຳພັນແບບຄົນຮັກກັນ ສອງສາມສະຖານະການ. ພວກເຈົ້າສາມາດນຳໃຊ້ລາຍການຂອງສິ່ງທີ່ຄົນເຮັດໃນຄວາມສຳພັນ ທີ່ມີໃນເອກະສານທີ່ແຈກຢາຍໃຫ້ນີ້ເພື່ອສົນທະນາວ່າ ຄວາມສຳພັນໃນສະຖານະການທີ່ພວກເຮົາກຳລັງຈະອ່ານນຳກັນຕໍ່ໄປນີ້ ເປັນຄວາມສຳຄັນທີ່ດີ ຫຼື ບໍ່ດີ."**

ບາດນີ້, ຂໍໃຫ້ອາສາສະໝັກສາມຄົນອ່ານສະຖານະການທີ 1, ໂປ່ ແລະ ບ່າວ, ແລະ ອາສາສະໝັກສາມຄົນອ່ານສະຖານະການທີ 2, ທາຄູ ແລະ ໄຄ, ພ້ອມທັງເອົາເອກະສານສຳລັບແຈກຢາຍ: ສະຖານະການຄວາມສຳພັນໃຫ້ແຕ່ລະຄົນ. ແບ່ງກຸ່ມ ໂດຍໃຫ້ເຄິ່ງຫນຶ່ງຂອງກຸ່ມຢູ່ໃນສະຖານະການທີ 1 ແລະ ອີກເຄິ່ງຫນຶ່ງຂອງກຸ່ມຢູ່ໃນສະຖານະການ 2. ຂໍໃຫ້ກຸ່ມທີ່ຖືກມອບຫມາຍໃຫ້ຮັບຜິດຊອບສະຖານະການຫນຶ່ງຍ້າຍອອກໄປເບື້ອງຫນຶ່ງຂອງຫ້ອງຮຽນ ແລະ ອີກກຸ່ມຫນຶ່ງຍ້າຍໄປຢູ່ດ້ານກົງກັນຂ້າມຂອງຫ້ອງຮຽນ. ຂໍໃຫ້ອາສາສະຫມັກອ່ານສະຖານະການທີ່ໄດ້ຮັບມອບໝາຍຢູ່ຕໍ່ຫນ້າກຸ່ມຂອງຕົນເອງ.

ຫຼັງຈາກໄດ້ອ່ານບົດລະຄອນຕ່າງໆດັ່ງໆແລ້ວ (ລວມທັງຜູ້ເລົ່າເລື່ອງ ແລະ ຕົວລະຄອນ), ບອກນັກຮຽນໃຫ້ໃຊ້ເວລາຫົກນາທີເພື່ອສົນທະນາສະຖານະການໃນກຸ່ມນ້ອຍໆຂອງເຂົາເຈົ້າ ໂດຍການຕອບຄຳຖາມລຸ່ມນີ້ (ທີ່ໄດ້ຂຽນໄວ້ລ່ວງໜ້າຢູ່ເທິງກະດານດຳ). ຂໍໃຫ້ນັກຮຽນມອບໝາຍໃຫ້ຜູ້ໜຶ່ງໃນແຕ່ລະກຸ່ມ ທີ່ຈະສາມາດແບ່ງປັນຄຳຕອບ ພາຍຫຼັງທີ່ເຂົາເຈົ້າໄດ້ສົນທະນານຳກັນແລ້ວ.

- **ເຈົ້າຄິດວ່ານີ້ເປັນຄວາມສຳພັນທີ່ດີ ຫຼື ບໍ່ດີ? ຍ້ອນຫຍັງ?**
- **ສັນຍານອັນໃດທີ່ບົ່ງບອກເຖິງຄວາມສຳພັນທີ່ດີ ຫຼື ບໍ່ດີ ທີ່ເຈົ້າເຫັນໃນຄວາມສຳພັນຂອງພວກເຂົາ ຈາກເອກະສານສຳລັບແຈກຢາຍ?**
- **ເຈົ້າຄິດວ່າ ໂປ່ ກັບ ບ່າວ ມີຄວາມເທົ່າທຽມກັນບໍ່ໃນການຕັດສິນໃຈກ່ຽວກັບຄວາມສຳພັນຂອງພວກເຂົາ? ຖ້າບໍ່, ຍ້ອນຫຍັງຈຶ່ງບໍ່ເທົ່າທຽມກັນ?**

ຫຼັງຈາກຫົກນາທີ, ບອກນັກຮຽນວ່າຄູຈະຖາມສອງສາມກຸ່ມເພື່ອແບ່ງປັນຄໍາຕອບຂອງເຂົາເຈົ້າ (ປັບຈໍານວນກຸ່ມໃຫ້ພໍດີກັບເວລາທີ່ເຫຼືອເພື່ອຈົບບົດຮຽນ) ສໍາລັບສະຖານະການທີ 1. ຖາມກຸ່ມທໍາອິດ ທີ່ອາສາສະໝັກສາມາດສະຫຼຸບຫຍໍ້ສະຖານະການໄດ້ຢ່າງໄວ ແລະ ຈາກນັ້ນແບ່ງປັນຄໍາຕອບຂອງພວກເຂົາ. ຖ້າພວກເຂົາຫາກພຽງແຕ່ບອກຂໍ້ຕາມເອກະສານທີ່ແຈກຢາຍ, ໃຫ້ນັກຮຽນອະທິບາຍພຶດຕິກໍາສະເພາະ ຈາກສະຖານະການທີ່ບົ່ງເບິ່ງເຖິງສິ່ງນັ້ນ. ຂຽນຄໍາຕອບຂອງເຂົາເຈົ້າໃສ່ກະດານດໍາ.

ນັກຮຽນໃນຫ້ອງຄວນລະບຸສະຖານະການທີ 1 ວ່າສະແດງສັນຍານຕ່າງໆຈາກລາຍການຄວາມສໍາພັນທີ່ດີ, ລວມທັງ:

- ໄດ້ຮັບການສະໜັບສະໜູນ ແລະ ຊຸກຍູ້
- ໄດ້ຮັບການປະຕິບັດຢ່າງສະເໝີພາບກັນ
- ມີຄວາມຊື່ສັດ

ພວກເຂົາຍັງຄວນຢືນຢັນວ່າທັງສອງຄົນມີໂອກາດເທົ່າທຽມກັນໃນການຕັດສິນໃຈ ແລະ ສະແດງທັດສະນະຂອງພວກເຂົາໃນສະຖານະການນີ້ ແລະ ອາດຈະຍົກຄໍາຖາມກ່ຽວກັບບົດບາດທາງເພດມີຜົນກະທົບແນວໃດຕໍ່ກັບຄວາມສາມາດ.

ຢືນຢັນວ່າ ໂປ່ ແລະ ບ່າວ ມີຄວາມສົນໃຈຕ່າງກັນ, ແຕ່ຍັງສະໜັບສະໜູນເຊິ່ງກັນ ແລະ ກັນ ໃນສິ່ງທີ່ສໍາຄັນສໍາລັບພວກເຂົາ. ພວກເຂົາທັງສອງບໍ່ຮູ້ສຶກເຖິງຄວາມຈໍາເປັນທີ່ຈະປະຖິ້ມຄວາມສົນໃຈສ່ວນຕົວ ຫຼື ຮູ້ສຶກວ່າຖືກບັງຄັບໃຫ້ຕ້ອງສົນໃຈສິ່ງດຽວກັບອີກຝ່າຍໜຶ່ງ. ເຂົາເຈົ້າມີຄວາມຊື່ສັດຕໍ່ກັນ ແລະ ກັນ, ທັງສອງຄົນມີໂອກາດເທົ່າທຽມກັນໃນການຕັດສິນໃຈ ແລະ ສະແດງທັດສະນະຂອງພວກເຂົາ, ແລະ ເຂົາເຈົ້າສາມາດເຈລະຈາປະນີປະນອມ ໃນສິ່ງທີ່ພວກເຂົາທັງສອງເພິ່ງພໍໃຈໄດ້.

ຕໍ່ໄປນີ້, ໃຫ້ບອກນັກຮຽນວ່າຄູຈະຖາມສອງສາມກຸ່ມເພື່ອແບ່ງປັນຄໍາຕອບຂອງພວກເຂົາ (ປັບຈໍານວນກຸ່ມໃຫ້ພໍດີກັບເວລາທີ່ເຫຼືອເພື່ອຈົບບົດຮຽນ) ສໍາລັບສະຖານະການທີ 2. ຖາມກຸ່ມທໍາອິດ ທີ່ອາສາສະໝັກສາມາດສະຫຼຸບຫຍໍ້ສະຖານະການໄດ້ຢ່າງໄວ ແລະ ຈາກນັ້ນແບ່ງປັນຄໍາຕອບຂອງພວກເຂົາ. ຖ້າພວກເຂົາຫາກພຽງແຕ່ບອກຂໍ້ຕາມເອກະສານທີ່ແຈກຢາຍ, ໃຫ້ນັກຮຽນອະທິບາຍພຶດຕິກໍາສະເພາະ ຈາກສະຖານະການທີ່ບົ່ງເບິ່ງເຖິງສິ່ງນັ້ນ. ຂຽນຄໍາຕອບຂອງເຂົາເຈົ້າໃສ່ກະດານດໍາ.

ນັກຮຽນໃນຫ້ອງຄວນລະບຸສະຖານະການທີ 2 ວ່າສະແດງສັນຍານຕ່າງໆຈາກລາຍການຄວາມສໍາພັນທີ່ບໍ່ດີ ຫຼື ຄວາມສໍາພັນທີ່ຮຸນແຮງ, ລວມທັງ:

- ພະຍາຍາມຈໍາກັດ ຫຼື ຄວບຄຸມສິ່ງທີ່ອີກຝ່າຍໜຶ່ງເຮັດ
- ມີຄວາມຫຶງຫວງປະຈໍາ
- ດຶກ ຫຼື ທໍາລາຍສິ່ງຂອງເວລາຜິດກັນ

ສຳລັບຄຳຖາມສຸດທ້າຍ, ແມ່ນໃຫ້ສອບຖາມຕໍ່ເພື່ອຫາຄຳຕອບວ່າ ເພດ ຫຼື ອາຍຸສາມາດສົ່ງຜົນໃຫ້ ທາຄູ ມີຄວາມສາມາດໃນການຕັດສິນໃຈໃນຄວາມສຳພັນຫຼາຍກວ່າ ໄຄ ຄືແນວໃດ.

ຢືນຢັນວ່າ ເຖິງວ່າ ທາຄູ ຈະຮັກ ແລະ ໄວ້ວາງໃຈ ໄຄ, ແຕ່ການກະທຳຂອງລາວໄດ້ເຮັດໃຫ້ມີຄວາມສຳພັນທີ່ບໍ່ດີ. ຖ້າລາວສາມາດຮຽນຮູ້ທີ່ຈະຄວບຄຸມອາລົມໃຈຮ້າຍຂອງລາວ, ບາງທີພວກເຂົາອາດຈະມີຄວາມສຳພັນທີ່ດີ. ຢ່າງໃດກໍຕາມ, ໄຄ ບໍ່ສົມຄວນທີ່ຈະໄດ້ຮັບການປະຕິບັດແບບນັ້ນ ແລະ ມັນອາດຈະບໍ່ປອດໄພສຳລັບນາງທີ່ຈະຢູ່ໃນຄວາມສຳພັນຄືທີ່ເປັນຢູ່. ໃຫ້ອະທິບາຍວ່າ ບໍ່ມີໃຜຄວນຮູ້ສຶກວ່າພວກເຂົາຕ້ອງຢູ່ໃນຄວາມສຳພັນ ຖ້າພວກເຂົາບໍ່ຕ້ອງການ ຫຼື ຖືກປະຕິບັດທີ່ບໍ່ດີຈາກຄົນອື່ນ.

(14 ນາທີ)

**ໝາຍເຫດສຳລັບຄູ:** ຖ້າທ່ານສາມາດຄົ້ນຫາຄວາມສຳພັນລະຫວ່າງເພດດຽວກັນ, ມັນກໍອາດເປັນໂອກາດໃນການສອນທີ່ສຳຄັນ ໃນການຕັ້ງຊື່ຕົວລະຄອນທັງສອງໃນເລື່ອງໃດເລື່ອງໜຶ່ງໃຫ້ເປັນເພດດຽວກັນ ເຊິ່ງສິ່ງນີ້ສາມາດເຮັດໃຫ້ຄວາມສຳພັນລະຫວ່າງ ຊາຍຮັກຊາຍ, ຍິງຮັກຍິງ, ແລະ ຮັກໄດ້ທັງສອງເພດ ເປັນເລື່ອງປົກກະຕິ ແລະ ຢໍ້າຕື່ມວ່າທຸກຄົນ, ບໍ່ວ່າລົດນິຍົມທາງເພດຂອງພວກເຂົາຈະເປັນແນວໃດ, ພວກເຂົາກໍສົມຄວນທີ່ຈະຢູ່ໃນຄວາມສຳພັນທີ່ດີ. ຖ້ານັກຮຽນສະແດງຄວາມຄິດເຫັນວ່າ ຄົນສອງຄົນທີ່ເປັນເພດດຽວກັນ ມີຄວາມສຳພັນແບບຄົນຮັກກັນນັ້ນ ບໍ່ແມ່ນທາງເລືອກທີ່ດີເລີຍ, ມັນເປັນສິ່ງສຳຄັນທີ່ຈະຊີ້ໃຫ້ເຫັນວ່າ ຄວາມສຳພັນຂອງຄົນສອງຄົນສາມາດມີໄດ້ທັງຄວາມສຳພັນທີ່ດີ ແລະ ບໍ່ດີ, ເຊັ່ນວ່າ ສິ່ງທີ່ໄດ້ລະບຸຢູ່ໃນເອກະສານທີ່ໄດ້ແຈກຢາຍ. ຄວາມສຳພັນແບບຊາຍຮັກຊາຍ ແລະ ຍິງຮັກຍິງ ບາງຄັ້ງກໍ່ເປັນຄວາມສຳພັນທີ່ດີ ແລະ ບາງຄັ້ງກໍ່ບໍ່ແມ່ນ, ຄືກັນກັບ ຄວາມສຳພັນແບບຕ່າງເພດທີ່ບາງຄັ້ງກໍ່ແມ່ນຄວາມສຳພັນທີ່ດີ ແລະ ບາງຄັ້ງກໍ່ບໍ່ແມ່ນ. ໃຫ້ທ່ານພະຍາຍາມປ່ຽນເປັນການສົນທະນາ ໂດຍການອະທິບາຍວ່າ ຈຸດສຳຄັນຂອງບົດຮຽນ ແມ່ນເພື່ອໃຫ້ນັກຮຽນມີເຄື່ອງມືໃນການປະເມີນສຸຂະພາບຂອງຄວາມສຳພັນຂອງຕົນເອງ.

## ຂັ້ນຕອນທີ 5

ສະຫຼຸບບົດຮຽນໂດຍເວົ້າວ່າ ສິ່ງສຳຄັນຄືຕ້ອງຮູ້ວ່າ ແມ່ນຫຍັງທີ່ຕ້ອງຊອກຫາໃນຄວາມສຳພັນ ທີ່ມັນແມ່ນຄວາມສຳພັນທີ່ດີ, ທີ່ສາມາດຕັດສິນໃຈ ແລະ ສະແດງທັດສະນະຂອງຕົນເອງຢ່າງເທົ່າທຽມກັນ ແມ່ນສ່ວນຫນຶ່ງທີ່ສຳຄັນຂອງຄວາມສຳພັນທີ່ດີ, ເພດ, ອາຍຸ, ແລະ ຄວາມຮັ່ງມີ ກໍສາມາດສົ່ງຜົນກະທົບຕໍ່ຄວາມສະເໝີພາບ, ແລະ ມັນເປັນສິ່ງສຳຄັນເຊັ່ນກັນ ທີ່ຈະຮັບຮູ້ເຖິງຄວາມສຳພັນທີ່ບໍ່ດີ ແລະ ໄດ້ຮັບການຊ່ວຍເຫຼືອຖ້າຕ້ອງການ. ໃຫ້ນັກຮຽນຮູ້ວ່າຖ້າພວກເຂົາເປັນຫ່ວງກ່ຽວກັບຄວາມສຳພັນທີ່ເຂົາເຈົ້າມີຢູ່, ມັນເປັນສິ່ງສຳຄັນທີ່ຈະເວົ້າກັບໃຜຜູ້ຫນຶ່ງກ່ຽວກັບຄວາມສຳພັນນັ້ນໂດຍການຕິດຕໍ່ຫຼັງເລີກຮຽນ, ເວົ້າກັບຜູ້ໃຫຍ່ທີ່ເຊື່ອຖືໄດ້, ໂທຫາສາຍດ່ວນ, ຫຼື ໄປທີ່ສູນສຸຂະພາບຊຸມຊົນ ຫຼື ຜູ້ໃຫ້ບໍລິການດູແລສຸຂະພາບ.

(1 ນາທີ)

## ສະຫຼຸບປະເດັນທີ່ສຳຄັນ

- ຄວາມສຳພັນສາມາດມີທັງດີ ແລະ ບໍ່ດີ.
- ການຮູ້ສິ່ງທີ່ຕ້ອງການ ແລະ ສິ່ງທີ່ບໍ່ຕ້ອງການໃນຄວາມສຳພັນ ແມ່ນສຳຄັນຕໍ່ກັບຄວາມປອດໄພ ແລະ ສຸຂະພາບທີ່ດີ.
- ຄວາມສາມາດໃນການຕັດສິນໃຈ ແລະສະແດງທັດສະນະຂອງຕົນເອງຢ່າງເທົ່າທຽມກັນ ເປັນສ່ວນສຳຄັນຂອງຄວາມສຳພັນທີ່ດີ.
- ບໍ່ມີໃຜຕ້ອງຢູ່ໃນຄວາມສຳພັນ ຖ້າພວກເຂົາບໍ່ຕ້ອງການ ຫຼື ຖ້າມັນບໍ່ດີ.

## ທາງເລືອກສຳລັບການປະເມີນຈຸດປະສົງການຮຽນຮູ້ໃນຂະນະສະຫຼຸບບົດຮຽນ

ກິດຈະກຳໃນແຜ່ນວຽກບົດຝຶກຫັດ ສາມາດຖືກນຳໃຊ້ເພື່ອປະເມີນຄວາມຮູ້ກ່ຽວກັບ ສິ່ງທີ່ເປັນຄວາມສຳພັນທີ່ດີ ແລະ ການເຮັດວຽກບ້ານ ຫຼື ໃບສອບຖາມ ສາມາດຖືກນຳໃຊ້ເພື່ອໃຫ້ນັກຮຽນລະບຸສາມສິ່ງທີ່ຄົນເຮັດໃນຄວາມສຳພັນທີ່ບໍ່ດີ. ເພື່ອປະເມີນທັດສະນະຄະຕິຕໍ່ຄວາມສະເໝີພາບໃນຄວາມສຳພັນ, ຄຳຖາມສຸດທ້າຍສາມາດຖາມວ່າ ເປັນຫຍັງມັນຈຶ່ງສຳຄັນສຳລັບຄົນທີ່ຢູ່ໃນຄວາມສຳພັນ ທີ່ຈະມີໂອກາດເທົ່າທຽມກັນໃນການຕັດສິນໃຈ ແລະ ສະແດງທັດສະນະຂອງພວກເຂົາເອງໃນຄວາມສຳພັນ.

## ຄຳແນະນຳໃນການປັບປ່ຽນສຳລັບການຮຽນການສອນທາງໄກ

ໃນກໍລະນີທີ່ເປັນການສອນທາງໄກ, ນຳໃຊ້ລະບົບດິຈິຕອນເຊັ່ນ Google Classroom ຫຼື Zoom ແລະ ເຄື່ອງມື ເຊັ່ນ Kahoot! ສາມາດນຳໃຊ້ເພື່ອລົງຄະແນນ ກ່ຽວກັບຄຸນລັກສະນະຄວາມສຳພັນທີ່ດີ ທີ່ໄດ້ຮັບຄວາມນິຍົມ ແລະ ກະດານດຳອອນລາຍ ສາມາດນຳໃຊ້ເພື່ອບັນທຶກໃນລະຫວ່າງການວິເຄາະສະຖານະການ ແລະ ການສົນທະນາ.

## ວຽກບ້ານ (ຖ້າມີ)

ບໍ່ມີ

ດັດແປງມາຈາກ: ການສະໜັບສະໜູນສຳລັບຊາວໜຸ່ມ, ອຸຍແນສໂກ, ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ. ແຜນການສອນ: ຄວາມສຳພັນທີ່ດີ ແລະ ການສະໜັບສະໜູນສຳລັບຊາວໜຸ່ມ. ຄວາມສຳພັນທີ່ດີ ຫຼື ບໍ່ດີ? ສິດທິ, ຄວາມເຄົາລົບ, ຄວາມຮັບຜິດຊອບ: ຫຼັກສູດຊັ້ນອະນຸບານ ເຖິງ ມັດທະຍົມສຶກສາປີທີ 7.

# ແຜ່ນວຽກບົດຝຶກຫັດ

## ເຈົ້າຕ້ອງການຫຍັງໃນຄວາມສຳພັນກັບໝູ່ຂອງເຈົ້າ?

ຊື່:

ວັນທີ:

**ຄຳແນະນຳ:ໂດຍທົ່ວໄປແລ້ວ, ມີຫຼາຍປັດໄຈທີ່ເຮັດໃຫ້ຄວາມສຳພັນເປັນຄວາມສຳພັນທີ່ດີ. ຈົ່ງທົບທວນຄືນລາຍການຕໍ່ໄປນີ້ແລະອີງມົນສາມສິ່ງທີ່ເຈົ້າຕ້ອງການໃນຄວາມສຳພັນທີ່ເຫັນວ່າມີຄວາມສຳຄັນທີ່ສຸດສຳລັບເຈົ້າ. ເຈົ້າອາດຈະເຫັນຫຼາຍສິ່ງທີ່ເຈົ້າມັກ, ແຕ່ລອງເລືອກສາມອັນທີ່ເຈົ້າເຫັນວ່າສຳຄັນທີ່ສຸດ. ປະຕິບັດຕາມຄຳແນະນຳຢູ່ທາງລຸ່ມຂອງຫນ້າເຈ້ຍຫຼັງຈາກທີ່ທ່ານໄດ້ເລືອກເອົາສາມສິ່ງທີ່ສຳຄັນທີ່ສຸດຂອງທ່ານແລ້ວ.**

ປະຕິບັດຕໍ່ກັນດ້ວຍຄວາມເຄົາລົບ

ສາມາດເຊື່ອໃຈເຊິ່ງກັນ ແລະ ກັນ

ປະຕິບັດຕໍ່ກັນຢ່າງເທົ່າທຽມ

ສະໜັບສະໜູນເຊິ່ງກັນ ແລະ ກັນ

ຊຸກຍູ້ເຊິ່ງກັນ ແລະ ກັນ

ຊື່ສັດຕໍ່ກັນ ແລະ ກັນ

ເຮັດໃຫ້ອີກຝ່າຍໜຶ່ງຫົວ/ຮູ້ສຶກດີ

ມີຄວາມສົນໃຈຮ່ວມກັນ

ເຄົາລົບໃນຄວາມສົນໃຈທີ່ແຕກຕ່າງກັນ

ມີຄວາມສຸກໃນການຢູ່ນຳກັນ

ສາມາດເຈລະຈາຕໍ່ລອງກັນໄດ້

ຮັບຟັງເຊິ່ງກັນ ແລະ ກັນ

**ເບິ່ງສາມສິ່ງທີ່ເຈົ້າໄດ້ເລືອກ, ບອກສິ່ງທີ່ເຈົ້າຕ້ອງການໃນຄວາມສຳພັນຫຼາຍທີ່ສຸດ ແລະ ຂຽນຄຳອະທິບາຍສັ້ນໆວ່າເປັນຫຍັງຈຶ່ງສຳຄັນສຳລັບເຈົ້າ. ສົ່ງແຜ່ນວຽກບົດຝຶກຫັດຂອງເຈົ້າໃນຕອນທ້າຍຂອງຫ້ອງຮຽນ.**

**ຄຸນລັກສະນະ ອັນດັບ 1:**

**ຄຳອະທິບາຍ:**

## ສະຖານະການທີ 1. ໂປ່ ແລະ ບ່າວ

**ຜູ້ເລົ່າເລື່ອງ:** ໂປ່ ແລະ ບ່າວ ມັກກັນຫຼາຍ. ບ່າວ ມັກການຫຼິ້ນກິລາບານເຕະ ແລະ ຫາກໍ່ເຂົ້າຮ່ວມກຸ່ມເພື່ອຫຼິ້ນນຳກັນຫຼັງຈາກຝຶກແອບມາຫຼາຍຊົ່ວໂມງໃນໄລຍະສອງສາມເດືອນຜ່ານມາ. ໂປ່ ຮັກການອ່ານ ແລະ ຫາກໍ່ເລີ່ມສະໂມສອນປຶ້ມຂອງຕົນເອງກັບກຸ່ມໝູ່ເພື່ອນ ຫຼັງຈາກໄດ້ເຮັດວຽກໜັກເພື່ອໃຫ້ມັນສາມາດດຳເນີນໄປໄດ້.

(ກຣິ້ງ, ກຣິ້ງ, ກຣິ້ງ…)

**ໂປ່:** ຮາໂຫຼ? ໂອ, ສະບາຍດີບ່າວ, ເຈົ້າສະບາຍດີບໍ່?

**ບ່າວ:** ສະບາຍດີໂປ່, ເຈົ້າຕ້ອງບໍ່ເຊື່ອແທ້ລະວ່າເກີດຫຍັງຂຶ້ນ. ຫຼັງຈາກທີ່ຂ້ອຍໄດ້ໃຊ້ເວລາຝຶກຊ້ອມເຕະບານມາດົນ, ສຸດທ້າຍຂ້ອຍກໍ່ຈະໄດ້ເຂົ້າຮ່ວມຫຼິ້ນໃນທີມແລ້ວ!

**ໂປ່:** ສຸດຍອດເລີຍບ່າວ! ຂ້ອຍດີໃຈກັບເຈົ້າແທ້ໆ. ຂ້ອຍຮູ້ວ່ານີ້ແມ່ນສິ່ງທີ່ເຈົ້າຕ້ອງການມາຕະຫຼອດ.

**ບ່າວ:** ມັນຈະແມ່ນວັນພະຫັດນີ້ຫຼັງເລີກຮຽນ, ໂປ່ ເຈົ້າມາໄດ້ບໍ່?

**ໂປ່:** ໂອ ບໍ່ໄດ້ຊ້ຳບ່າວ - ມັນແມ່ນມື້ທີ່ຂ້ອຍເປັນເຈົ້າພາບຈັດປະຊຸມສະໂມສອນປຶ້ມ ຄັ້ງທຳອິດຂອງຂ້ອຍ. ຂ້ອຍໄດ້ໃຊ້ເວລາໃນການກະກຽມປະຊຸມຄັ້ງນີ້ຫຼາຍ, ຂ້ອຍຄືຊິໄປຫາເຈົ້າບໍ່ໄດ້.

**ບ່າວ:** ໂອ້ (ທ່າທາງຜິດຫວັງຫຼາຍ)… ຂ້ອຍຈະດີໃຈຫຼາຍຖ້າເຈົ້າມາເບິ່ງຂ້ອຍເຕະບານໄດ້, ແຕ່ຂ້ອຍກໍ່ຮູ້ວ່າປະຊຸມນັ້ນສຳຄັນກັບເຈົ້າຫຼາຍ.

**ໂປ່:** ຂ້ອຍຮູ້.. ຂ້ອຍຂໍໂທດ. ແຕ່ດຽວກ່ອນ, ຂ້ອຍຄິດອອກຢ່າງໜຶ່ງ…ຍ້ອນວ່າການເຕະບານຂອງເຈົ້າແມ່ນຫຼັງເລີກຮຽນແຕ່ຈະດົນກວ່າປະຊຸມຂອງຂ້ອຍ, ສະນັ້ນ ຂ້ອຍສາມາດໄປເບິ່ງເຈົ້າໃນເຄິ່ງຫຼັງໄດ້. ເຈົ້າຄິດວ່າແນວໃດ?

**ບ່າວ:** ເປັນແບບນັ້ນກໍ່ສຸດຍອດໄປເລີຍ ໂປ່. ຂອບໃຈ ແລະ ຂ້ອຍກະຢາກໃຫ້ຮອດໄວໆເດ! ຂ້ອຍຫວັງວ່າ ປະຊຸມຂອງເຈົ້າຈະຜ່ານໄປດ້ວຍດີເດີ.

**ໂປ່:** ຂອບໃຈບ່າວ. ແລ້ວຂ້ອຍຈະເລົ່າສູ່ເຈົ້າຟັງວ່າມັນເປັນແນວໃດ ແລະ ຂ້ອຍກະຢາກໄປເບິ່ງເຈົ້າຫຼິ້ນເຕະບານໄວໆ.

## ສະຖານະການທີ 2. ທາຄູ ແລະ ໄຄ

**ຜູ້ເລົ່າເລື່ອງ:** ໄຄ ມັກ ທາຄູ ຫຼາຍ ແລະ ຕື່ນເຕັ້ນທີ່ຈະໄດ້ຢູ່ກັບຜູ້ຊາຍທີ່ມີອາຍຸຫຼາຍກວ່າ, ເຊິ່ງເຮັດໃຫ້ເພື່ອນຜູ້ຍິງຂອງນາງບາງຄົນປະທັບໃຈ, ແຕ່ຄົນອື່ນເປັນຫ່ວງເພາະເບິ່ງຄືວ່າ ທາຄູ ຕັດສິນໃຈ ໃນຄວາມສຳພັນຂອງພວກ ເຂົາທັງຫມົດ. ທາຄູ ກໍ່ມັກ ໄຄ ຄືກັນ. ນາງເປັນຄົນໜ້າຮັກ ແລະ ສະຫຼາດ. ທາຄູ ຮູ້ສຶກໃຈຮ້າຍເມື່ອລາວເຫັນນາງລົມກັບຜູ້ຊາຍຄົນອື່ນ ສອງສາມຄົນໃນເວລາກິນເຂົ້າທ່ຽງຢູ່ໂຮງຮຽນ ເຊິ່ງສິ່ງປື້ມຂຽນໃຫ້ນາງແລ້ວນາງເອົາໃສ່ໃນກະເປົາ.

**ທາຄູ:** ເຮ້ ໄຄ, ມານີ້!

**ໄຄ:** ສະບາຍດີ ທາຄູ, ແມ່ນຫຍັງ?

**ທາຄູ:** ເຈົ້າລົມຫຍັງກັບຜູ້ຊາຍພວກນັ້ນ?

**ໄຄ:** ພວກເຮົາກຳລັງລົມກັນວ່າໃຜຊິເຮັດຫຍັງ ສຳລັບວຽກທີ່ເຮົາຕ້ອງເຮັດໃນຊົ່ວໂມງຮຽນວິທະຍາສາດ, ເຈົ້າຖາມເຮັດຫຍັງ?

**ທາຄູ:** ເຈົ້າຕ້ອງເຊົາລົມກັບຜູ້ຊາຍຄົນອື່ນຕໍ່ໜ້າຂ້ອຍ ແລະ ໝູ່ຂອງຂ້ອຍ. ຂ້ອຍບໍ່ອະນຸຍາດໃຫ້ເຈົ້າເຮັດແບບນັ້ນອີກແລ້ວ!

**ໄຄ:** ຢຸດຮ້ອງໃສ່ຂ້ອຍ. ເຈົ້າໝາຍຄວາມວ່າແນວໃດ ວ່າຊິບໍ່ອະນຸຍາດຂ້ອຍເຮັດແບບນັ້ນອີກ? ຂ້ອຍສາມາດລົມກັບໃຜກໍ່ໄດ້ທີ່ຂ້ອຍຕ້ອງການ. ພຽງແຕ່ຍ້ອນວ່າຂ້ອຍລົມກັບຜູ້ຊາຍ ມັນບໍ່ໄດ້ມີຫຍັງເລີຍ, ມັນແມ່ນວຽກຊື່ໆ. ເຈົ້າຫຶງຫວງເກີນໄປ ໂດຍບໍ່ມີເຫດຜົນ - ຂ້ອຍບໍ່ເຂົ້າໃຈເຈົ້າເລີຍ.

**ທາຄູ:** ຂ້ອຍຊິເອົາກະເປົາເຈົ້າ - ເອົາມາໃຫ້ຂ້ອຍ!

**ໄຄ:** ເຈົ້າເຮັດຫຍັງ? ເຊົາແມະ! ປ່ອຍຂ້ອຍແມະ - ເຈົ້າເຮັດໃຫ້ກະເປົາຂ້ອຍຂາດ! ເອົາມາໃຫ້ຂ້ອຍຄືນ - ຂ້ອຍຊິໄປແລ້ວ.

**ທາຄູ:** ດຽວ, ໄຄ! ຂ້ອຍຂໍໂທດ! ຂ້ອຍບໍ່ໄດ້ຕັ້ງໃຈຊິໃຈຮ້າຍ ແລະ ເຮັດໃຫ້ກະເປົາເຈົ້າຂາດ. ຂ້ອຍຮັກເຈົ້າ ແລະ ເຊື່ອໃຈເຈົ້າ. ຂ້ອຍສັນຍາວ່າຂ້ອຍຈະບໍ່ເຮັດອີກ. ມັນເປັນອຸບັດຕິເຫດ. ຂ້ອຍພຽງແຕ່ໃຈຮ້າຍເກີນໄປ ຂ້ອຍຫ້າມໂຕເອງບໍ່ໄດ້.

# ເອກະສານສຳລັບແຈກຢາຍ

**ສັນຍານທີ່ດີ, ທີ່ບໍ່ດີ, ແລະ ສັນຍານເຕືອນຂອງການລ່ວງລະເມີດ**

## ໃນຄວາມສຳພັນທີ່ດີ, ຜູ້ຄົນຈະ...

- ປະຕິບັດຕໍ່ຄູ່ຂອງຕົນດ້ວຍຄວາມເຄົາລົບ ແລະ ເປັນທຳ
- ສະໜັບສະໜູນ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນ
- ປະຕິບັດຕໍ່ກັນຢ່າງເທົ່າທຽມ
- ຊື່ສັດ
- ໄດ້ຮັບຄວາມໄວ້ວາງໃຈຈາກຄູ່ຂອງພວກເຂົາ
- ມີຄວາມສົນໃຈຮ່ວມກັນ
- ຍັງມີຄວາມສົນໃຈ ແລະ ຕົວຕົນທີ່ຕ່າງກັນ
- ພະຍາຍາມຢ່າງໜັກເພື່ອໃຫ້ມີການສື່ສານທີ່ຊື່ສັດ ແລະ ຈະແຈ້ງ
- ມີຄວາມສຸກທີ່ໄດ້ຢູ່ນຳກັນ
- ບໍ່ເຄີຍທຳຮ້າຍຄູ່ຂອງພວກເຂົາບໍ່ວ່າທາງດ້ານຮ່າງກາຍ ຫຼື ທາງເພດ

## ໃນຄວາມສຳພັນທີ່ບໍ່ດີ, ຜູ້ຄົນຈະ...

- ປະຕິບັດຕໍ່ຄູ່ຂອງຕົນຢ່າງບໍ່ມີຄວາມເຄົາລົບ ແລະ ບໍ່ເປັນທຳ
- ບໍ່ປະຕິບັດຕໍ່ກັນຢ່າງເທົ່າທຽມ
- ມີການໂຕ້ຖຽງ ແລະ ຕໍ່ສູ້ກັນເລື້ອຍໆ
- ບໍ່ມີຄວາມສົນໃຈຮ່ວມກັນ
- ຫຼື ພວກເຂົາມີແຕ່ເຮັດສິ່ງຕ່າງໆຮ່ວມກັນ – ພວກເຂົາບໍ່ມີໝູ່ ຫຼື ຄວາມສົນໃຈ ແຍກຈາກກັນ
- ບໍ່ຊື່ສັດກັບຄູ່ຂອງຕົນ
- ບໍ່ສົນໃຈຄວາມຮູ້ສຶກຂອງຄູ່ຂອງຕົນ
- ບໍ່ມີຄວາມສຸກໃນການຢູ່ນຳກັນ
- ພະຍາຍາມຄວບຄຸມກັນແລະກັນ

## ສັນຍານເຕືອນຂອງຄວາມສຳພັນທີ່ຖືກລ່ວງລະເມີດ ລວມເຖິງເວລາທີ່ຄົນ...

- ດຶກຖິ້ມ ຫຼື ທຳລາຍສິ່ງຂອງໃນລະຫວ່າງການໂຕ້ຖຽງ
- ພະຍາຍາມຄວບຄຸມສິ່ງທີ່ອີກຝ່າຍເຮັດ, ຜູ້ທີ່ພວກເຂົາພົບປະ, ສິ່ງທີ່ພວກເຂົາໃສ່, ຫຼື ສິ່ງທີ່ພວກເຂົາເວົ້າ
- ມັກຫຶງຫວງ ຫຼື ຫຶງຫວງຫຼາຍເກີນໄປ
- ທຳຮ້າຍຄົນອື່ນທາງຮ່າງກາຍ ຫຼື ທາງເພດ
- ເຮັດໃຫ້ຄົນອື່ນນ້ອຍເນື້ອຕໍ່າໃຈ, ເອີ້ນຊື່ພວກເຂົາ ຫຼື ເຮັດໃຫ້ພວກເຂົາອັບອາຍ.
- ມີສ່ວນຮ່ວມໃນພຶດຕິກຳ "ເຮັດໃຫ້ຄົນອື່ນເປັນບ້າ"—ນີ້ແມ່ນ ເວລາທີ່ຄົນເວົ້າຕົວະ ຫຼື ປ່ຽນເລື່ອງຂອງເຂົາເຈົ້າ, ຫຼື ເມື່ອເຂົາເຈົ້າ ປະຕິເສດ ຫຼື ດູຖູກປະສົບການຂອງຄົນອື່ນ. ພຶດຕິກຳນີ້ມັກຈະເຮັດໃຫ້ຄົນອື່ນຮູ້ສຶກວ່າພວກເຂົາ "ກຳລັງຈະເປັນບ້າ."

**!** ຖ້າເຈົ້າຄິດວ່າເຈົ້າຢູ່ໃນຄວາມສຳພັນທີ່ຖືກລ່ວງລະເມີດ, ມັນເປັນສິ່ງສຳຄັນທີ່ຈະເວົ້າກັບໃຜຜູ້ໜຶ່ງກ່ຽວກັບເລື່ອງນີ້. ລົມກັບຜູ້ໃຫຍ່ທີ່ເຊື່ອຖືໄດ້, ໂທຫາສາຍດ່ວນ, ຫຼື ໄປທີ່ສູນສຸຂະພາບຊຸມຊົນ ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບ.